ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງຈະລາຈອນທາງອາກາດລາວ

ເລກທີ 3217 /ກຈລ
ນະຄອນຫລວງວຽງຈັນ, ວັນທີ 7 ຕຸລາ 2026

ໜັງສືແຈ້ງເຊີນປະມູນ (ສະບັບດັດແກ້)

1. ກອງຈະລາຈອນທາງອາກາດລາວ ກະຊວງໂຍທາທິການ ແລະ ຂົນສົ່ງ. ໄດ້ຮັບງົບປະມານປະຈຳປີ 2026. ສຳລັບການປະມູນ-ຈັດຊື້ເຄື່ອງແບບພະນັກງານ ປະຈຳປີ 2026. ຈຶ່ງຂໍເຊີນບັນດາບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຍື່ນຊອງປະມູນ, ກຳນົດເວລາໃນການມອບ-ຮັບ ແມ່ນພາຍໃນ 60 ວັນ;
2. ການປະມູນຈະດຳເນີນຕາມຂັ້ນຕອນ ການປະມູນເປີດກ້ວາງພາຍໃນ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ແມ່ນອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຮ່ວມແຂ່ງຂັນປະມູນ ສາມາດຕິດຕໍ່ພົວພັນເອົາເອກະສານປະມູນໄດ້ທີ່ ກອງຈະລາຈອນທາງອາກາດລາວ ກະຊວງໂຍທາທິການ ແລະ ຂົນສົ່ງ, ເບີໂທລະສັບຕິດຕໍ່ 021 520776, 020 55342660, 020 54111242 ໃນເວລາລັດຖະການ;
4. ເອກະສານປະມູນເລີ່ມຂາຍນັບແຕ່ວັນທີແຈ້ງເຊີນເປັນຕົ້ນໄປໃນລາຄາ 2.000.000 ກີບ/ຊອງ. ວິທີການຊຳລະເປັນເງິນສົດ ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນຳໃຊ້ເຂົ້າໃນວຽກງານການປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09.00 ໂມງ ຂອງວັນທີ 04 ພະຈິກ 2026. ຊອງປະມູນທຸກໆຊອງຈະໄດ້ເປີດ ເວລາ 09.00 ໂມງ ຂອງວັນທີ 04 ພະຈິກ 2026 ຢູ່ຫ້ອງປະຊຸມ ກອງຈະລາຈອນທາງອາກາດລາວໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນເຂົ້າຮ່ວມແຂ່ງຂັນ ທີ່ຫ້ອງປະຊຸມ ຂອງກອງຈະລາຈອນທາງອາກາດລາວ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຖືກຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດຊອງ;
6. ຊອງປະມູນຕ້ອງຄ້ຳປະກັນດ້ວຍແຊ້ກ (ວີຊ່າ) ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ ຊຶ່ງມີມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີສະເໜີປະມູນ.

ໝາຍເຫດ: ແຈ້ງເຊີນສະບັບນີ້ດັດແກ້ ແຈ້ງເຊີນສະບັບ ເລກທີ 3039/ກຈລ, ລົງວັນທີ 24 ກັນຍາ 2026 (ເຫດຜົນດັດແກ້ຍ້ອນວ່າ ວັນທີ 01 ພະຈິກ 2026 ແມ່ນກົງກັບວັນພັກລັດຖະການ, ກົງກັບ ວັນອາທິດ)

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນດັ່ງກ່າວຕາມທາງຄອນດ້ວຍ./.

ຫົວໜ້າກອງ

ກະຊວງໂຍທາທິການ ແລະ ຂົນສົ່ງ ★ ກອງຈະລາຈອນທາງອາກາດລາວ ★

ອຳດູນລາ ສາລິນທອນ